FROM PRIMARY TO HIGH SCHOOL: THE NEXT BIG STEP
UNDERSTANDING YOUR CHILD'S SCHOOLWORK
INFORMATION SHEET 1

# ຈາກໂຮງຮຽນປະຖົມ ສູ່ ໂຮງຮຽນມັທຍົມ: ບາດກ້າວຕໍ່ໄປອັນສໍາຄັນ

## ທໍາຄວາມເຂົ້າໃຈກ່ຽວກັບວຽກຮຽນຂອງລູກທ່ານ







ຢູ່ Year 7 ລູກຂອງທ່ານຈະຖືກແນະນໍາໃຫ້ຮູ້ຈັກ ວິຊາຮຽນທີ່ພວກເຂົາເຈົ້າບໍ່ເຄີຍໄດ້ພົບຜ່ານມາເທື່ອ ແລະ ວິຊາອື່ນໆທີ່ອາດມີວິທີຮຽນແລະການເນັ້ນໜັກ ທີ່ແຕກຕ່າງໄປຈາກການຮຽນຢູ່ໂຮງຮຽນປະຖົມ.

ພວກເຂົາເຈົ້າຍັງຖືກຄາດຫວັງໃຫ້ເປັນຄົນທີ່ບໍ່ຕ້ອງອາສັຍຄົນອື່ນ ແລະ ເຊື່ອໝັ້ນໃນຕົວເອງຫຼາຍກວ່າຕອນທີ່ຢູ່ໃນໂຮງຮຽນປະຖົມ.

ເພື່ອຈະມີສິດໄດ້ຮັບ School Certificate (ປະກາສນິຍາບັດໄດ້ຮັບໃນການຈົບການສຶກສາຕາມວິຊາທີ່ກໍານົດໄວ້ຂອງປີ7-10) ໃນຕອນທ້າຍຂອງ Year 10, ບັນດານັກຮຽນຕ້ອງຮຽນວິຊາຕ່າງໆດັ່ງຕໍ່ລົງໄປນີ້ຈາກ Year 7 ເປັນຕົ້ນໄປ:

- ພາສາອັງກິດ
- ເລກ
- ວິທຍາສາດ
- ພູມີສາດ
- ປວັດສາດ
- ພາສາຕ່າງໆ
- ເທັກໂນໂລຈີ
- ສິລປະການແຕ້ມ
- ດົນຕຣີ
- ການສຶກສາດ້ານພັທນາຕົວເອງ ສຸຂພາບ ແລະ ຮ່າງກາຍ (PDHPE).

ບັນດານັກຮຽນໃນ Year 7-10 ຍັງອາດມີສິດເລືອກຮຽນຈາກພວກວິຊາທີ່ເລືອກຮຽນໄດ້. ຕົວຢ່າງຂອງວິຊາສ່ວນຫຼາຍທີ່ມີໄວ້ໃນ Year 9 and 10 ມີຄື:

- ການຮຽນກ່ຽວກັບຊາວອາບໍຣິຈິໂນລ
- ເທັກໂນໂລຈີດ້ານກະເສຕກັມ
- ການຄ້າ
- ເຕັ້ນຣໍາ
- ການອອກແບບ ແລະ ເທັກໂນໂລຈີ
- ລະຄອນ
- ເທັກໂນໂລຈີດ້ານອາຫານ
- ເທັກໂນໂລຈີດ້ານກຣາຟຟິກ
- ເທັກໂນໂລຈີດ້ານອຸດສາຫະກັມ
- ເທັກໂນໂລຈີດ້ານຂໍ້ມູນ ແລະ ຊອັຟແວຣ໌
- ເທັກໂນໂລຈີດ້ານທະເລ ແລະ ການເພາະທາງນໍ້າ
- ດົນຕຣີ
- ການຖ່າຍພາບ ແລະ ການສື່ສານແບບດິຈິໂຕລ
- ການຮຽນດ້ານກິຈກັມທາງຮ່າງກາຍແລະກິລາ
- ເທັກໂນໂລຈີດ້ານເຄື່ອງຜ້າ
- ສິລປະການແຕ້ມ
- ການອອກແບບທີ່ກວມທຸກສິລປະ
- ການຮຽນດ້ານວຽກງານ
- ການຮຽນດ້ານພາສາ ມີໃຫ້ເລືອກ17ພາສາ

ບັນດາວິຊາທີ່ເລືອກຮຽນໄດ້ທີ່ມີໃຫ້ຢູ່ໃນໂຮງຮຽນມັທຍົມຫຼວງຂອງທ່ານນີ້ ຂຶ້ນຢູ່ກັບຈໍານວນຂອງນັກຮຽນທີ່ສົນໃຈໃນວິຊານັ້ນໆ ແລະ ມີຜູ້ສອນທີ່ມີຄວາມຊໍານານໃນວິຊານັ້ນຢູ່ພາຍໃນໂຮງຮຽນ ຫຼືບໍ່. ຖ້າລູກ ຂອງທ່ານມີຄວາມສາມາດສະເພາະ ຫຼື ມີຄວາມສົນໃຈໃນດ້ານໃດດ້ານນຶ່ງ ທ່ານອາດຈະ ຕ້ອງຊອກເບິ່ງໂຮງຮຽນມັທຍົມພິເສດສະເພາະຂອງ ພວກເຮົາ.

## ກິຈກັມອື່ນໆພາຍໃນໂຮງຮຽນ

ກິຈກັມອື່ນໆບາງຢ່າງທີ່ທາງໂຮງຮຽນມີໃຫ້ເພື່ອອູ້ມຊູການພັທນາດ້ານສັງຄົມແລະຕົວເອງຂອງນັກຮຽນແຕ່ລະຄົນ ຮວມມີ:

- ການອູ້ມຊູກຸ່ມໝູ່ເພື່ອນ ແລະ ການປະນີປະນອມກຸ່ມໝູ່ເພື່ອນ
- ອ້າຍເອື້ອຍລ້ຽງຂອງນັກຮຽນ

NSW GOVERNMENT
Education
Public Schools

- ໂຄງການສຳລັບຜູ້ມີພອນສວັນ ແລະຜູ້ມີຄວາມສາມາດພິເສດ
- ໂຄງການໃຫ້ຣາງວັນແລະການຮັບຮູ້
- ການຮຽນເຣື່ອງຢາ ແລະ ອະນາມັຍ
- ການຮຽນເຣື່ອງ ຕໍ່ຕ້ານການດູຖູກຜິວພັນ
- ການຮຽນເຣື່ອງຄວາມຣຸນແຮງໃນຄອບຄົວ ແລະ ການຄຸ້ມຄອງເດັກ
- ໂຄງການປ້ອງກັນອາຊຍາກັມ
- ໂຄງການ ສຸຂພາບແລະຄວາມແຂງແຮງ
- ໂຄງການ ການເຊື່ອມລະຫວ່າງ Year 6-7
- ການເຝິກຫັດການເປັນຜູ້ນຳນັກຮຽນ
- ສະພາຜູ້ຕາງໜ້ານັກຮຽນ
- ການໄປນອນຄ້າຍແບບຜະຈົນພັຍ ແລະ ການໄປທັສນະສຶກສາ.

## ວຽກໂຮງຮຽນ

ຕາມທັມມະດາແລ້ວ ລູກຂອງທ່ານຈະມີວຽກທີ່ທາງໂຮງຮຽນຈັດໃຫ້ໃນແຕ່ລະມື້ ແລະ ເມື່ອພວກເຂົາຍ້າຍເຂົ້າໄປສູ່ປີສູງຂຶ້ນ ວຽກໂຮງຮຽນ ແລະ ຄວາມຕ້ອງການທາງການຮຽນກໍຈະເພີ້ມຂຶ້ນ. ວຽກໂຮງຮຽນຈະລື້ມຄືນວຽກຕ່າງໆທີ່ໄດ້ເຮັດຢູ່ໃນ ຫ້ອງຮຽນ ແລະຊ່ວຍພັທນາຄວາມຊຳນານຕ່າງໆ ເຊັ່ນການຄົ້ນຄວ້າແລະການຈັດການເຣື່ອງເວລາ. ມັນຍັງຈະຊ່ວຍເຮັດໃຫ້ມີນິສັຍປະຈຳຕົວໃນການ ຢາກຮຽນມີຄວາມຕັ້ງອົກຕັ້ງໃຈ ແລະ ມີວິນັຍ ໃນຕົວເອງ.

ທ່ານສາມາດຊ່ວຍລູກຂອງທ່ານດ້ວຍການ:

- ມີຄວາມສົນໃຈຢ່າງແຂງຂັນກັບວຽກໂຮງຮຽນຂອງພວກເຂົາເຈົ້າ
- ສນັບສນູນໃຫ້ ເຂົາເຈົ້າສລະເວລາແຕ່ລະມື້ເພື່ອເຮັດວຽກ ໂຮງຮຽນ
- ໃຫ້ສະຖານທີ່ທີ່ດີສຳລັບການເຮັດວຽກໂຮງຮຽນ ແລະສຳລັບຮຽນໜັງສື ຖ້າພໍເປັນໄປໄດ້
- ຊ່ວຍນາຍຄູຄວບຄຸມເບິ່ງວຽກໂຮງຮຽນ ດ້ວຍການເຊັນຊື່ຮັບວ່າວຽກໂຮງຮຽນໄດ້ເຮັດ ຮຽບຮ້ອຍ ຖ້າຫາກຖືກຂໍມາ ແລະ ໃຫ້ຮູ້ວ່າ ຈຳນວນຂອງວຽກໂຮງຮຽນທີ່ຖືກຈັດມານັ້ນມີຫຼາຍປານໃດ
- ຕິດຕໍ່ເວົ້າລົມກັບພວກນາຍຄູເຖິງຄວາມກັງວົນໃດໆກ່ຽວກັບເຣື່ອງວຽກໂຮງຮຽນ ຫຼື ວິທີທີ່ລູກຂອງທ່ານເຮັດວຽກໂຮງຮຽນ
- ຊຸກຍູ້ລູກຂອງທ່ານໃຫ້ອ່ານແລະ ມີຄວາມສົນໃຈໃນເຫດການປັດຈຸບັນ
- ແຈ້ງທາງໂຮງຮຽນເຖິງສະຖານະການໃນຄອບຄົວ ຫຼື ກິຈກັມຂອງຫຼັກສູດພິເສດທີ່ອາດຕ້ອງການເພື່ອຈະໄດ້ນຳມາພິຈາຣະນາໃນເວລາທີ່ຈະໃຫ້ວຽກໂຮງຮຽນ ຫຼື ໃຫ້ຄະແນນ.

ແຕ່ລະໂຮງຮຽນຈະແຕ່ງນະໂຍບາຍວຽກໂຮງຮຽນຂອງຕົວເອງ ດ້ວຍການປຶກສາຫາລືກັບບັນດາພໍ່ແມ່ ແລະ ຜູ້ດູແລ. ທ່ານສາມາດຂໍເອົາສຳເນົານຶ່ງໄດ້ຈາກທາງໂຮງຮຽນຂອງທ່ານ.

## ການຣາຍງານຄວາມກ້າວໜ້າ

ໃນແຕ່ລະປີ ທ່ານຈະໄດ້ຮັບການຣາຍງານເຣື່ອງຄວາມກ້າວໜ້າຂອງລູກທ່ານເປັນລາຍລັກອັກສອນສອງໃບເປັນຢ່າງໜ້ອຍ - ຕາມປົກກະຕິແລ້ວແມ່ນຕອນທ້າຍຂອງເທີມ2 ແລະ ເທີມ4. ທັງທ່ານຄູໃຫຍ່ ແລະ ນາຍຄູມີຄວາມຍິນດີທີ່ຈະປຶກສາຫາລືເຣື່ອງຄວາມກ້າວໜ້າຂອງລູກທ່ານກັບທ່ານ.

ຫຼາຍໂຮງຮຽນມີການປະຊຸມລະຫວ່າງພໍ່ແມ່/ນາຍຄູ (ຕາມທັມມະດາແມ່ນໃນຕອນກາງຄືນ)ເພື່ອໃຫ້ໂອກາດໃຫ້ບັນດາພໍ່ແມ່ໄດ້ປຶກສາຫາລືເຣື່ອງຄວາມກ້າວໜ້າຂອງລູກກັບນາຍຄູຂອງລູກຕົນ. ໂຮງຮຽນມັທຍົມສ່ວນຫຼາຍຊຸກຍູ້ໃຫ້ພວກພໍ່ແມ່ໄປ ຢ້ຽມຢາມໂຮງຮຽນ ຫຼື ໂທຣະສັບໄປເວລາໃດກໍໄດ້ຖ້າຢາກປຶກສາຫາລືເຣື່ອງຄວາມກັງວົນໃດໆ ທີ່ພວກເຂົາເຈົ້າອາດມີ ກ່ຽວກັບຄວາມກ້າວໜ້າຂອງລູກໆ.

ຖ້າທ່ານຕ້ອງການ ທ່ານສາມາດຂໍເອົານາຍພາສາມາບ່ອນປະຊຸມຂອງພໍ່ແມ່/ນາຍຄູ ແລະ ຖ້າເປັນໄປໄດ້ທາງໂຮງຮຽນກໍຈະຈັດຫາໃຫ້ທ່ານ.

## ບໍຣິການ ນາຍພາສາທາງໂທຣະສັບ

ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານໃນການ ຕິດຕໍ່ທ່ານຄູໃຫຍ່ຂອງທ່ານ ກະຣຸນາໂທຣະສັບຫາ ບໍຣິການ ນາຍພາສາທາງໂທຣະສັບ ຕາມເບີ 131 450 ແລ້ວຂໍເອົານາຍພາສາທີ່ປາກພາສາລາວ. ນາຍພາສາຈະໂທຫາທ່ານຄູໃຫຍ່ ແລະ ຈະຢູ່ກັບສາຍ ເພື່ອຊ່ວຍໃນການເວົ້າລົມຂອງທ່ານ. ທ່ານບໍ່ຕ້ອງຈ່າຍ ຄ່າໃດໆໃນບໍຣິການນີ້.

NSW Department of Education

GPO Box 33
Sydney NSW 2001
T 9561 8000

NSW GOVERNMENT | Education Public Schools